# ຮັກນ້ອງໃຫ້ຫລາຍ

ປະພັນໂດຍ ວັນພີລາ ສ.ຜາບມີໄຊຍ໌
ຮ້ອງໂດຍ ວຽງໄຊ(ວີນາ) ສວັນນ໌
ດົນຕຣີ ຄນະ ສາຍສັມພັນທ໌
ບັນທຶກ(ອັດ) ະປັນເທັບ ອອກຈຳໜ່າຍຄັ້ງທຳອິດ 1983 ທີ່ Montreal, Qc, Canada

1- ຮັກນ້ອງໃຫ້ຫລາຍ ສາຍໃຈຄົນດີ
ຢູ່ໃນໂລກນີ້ ມີພຽງແຕ່ອ້າຍເທົ່ານັ້ນ
ນ້ອງເປັນຍິງ ສາວລາວອົພຍົບພາກບ້ານ
ອ້າຍຈຶ່ງສົງສານ ຮັກນ້ອງໃຫ້ນານ ຢ່າປ່ຽນແປຜັນ

2- ຮັກນ້ອງອີຫລີ ເນີ ຊາຍຄົນດີ
ຫົວໃຈນ້ອງນີ້ ມີອ້າຍທີ່ນ້ອງບູຊາ
ນ້ອງຮັກນ້ອງຫວງ ດັ່ງດວງແກ້ວຕາ
ຫວັງປຣາຖນາ ຮ່ວມຊີວາກັບອ້າຍຄົນດຽວ

R ອ້າຍຄືແສງທຽນ ແຫ່ງຊີວິດ
ອ້າຍຄືດວງຈິຕ ທີ່ນ້ອງໝັ້ນໝາຍ
ອ້າຍຄືຍອດຊາຍ ທີ່ນ້ອງຕ້ອງການ
ຢ່າລວງຢ່າຫລອກ ໃຫ້ນ້ອງພິການ
ຢ່າທໍຣະມານ ໃຫ້ນ້ອງຊໍ້າໃຈ

3- ຮັກນ້ອງໃຫ້ຫລາຍ ຊົ່ວນິຕນິຣັນຕ໌
ຫົວໃຈອ້າຍນັ້ນ ຢ່າປັນ ຢ່າແບ່ງໃຫ້ໃຜ
ສຸດທີ່ຮັກ ນ້ອງຮັກອ້າຍກ່ວາຊາຍໃດ
ຫວັງມອບກາຍໃຈ ແກ່ຍອດຊາຍ ຄືອ້າຍຄົນດຽວ

ຈົບ